**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ..07../ສພຂ.ຊຍ
ໄຊຍະບູລີ, ວັນທີ..13./.1./.2024

# ມະຕິ
## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງວຽກງານ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນແຂວງ

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ຂໍ້ 3;
- ອີງຕາມ ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ສະບັບເລກທີ 37/ອຍກ.ຂ, ລົງວັນທີ 9 ມັງກອນ 2024.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຂອງບັນດາທ່ານ ສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນ ແຂວງໄຊຍະບູລີ ຊຸດທີ II ໃນວາລະກອງປະຊຸມ ຄັ້ງວັນທີ 13 ມັງກອນ 2024.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023**

ກອງປະຊຸມສະແດງຄວາມຊົມເຊີຍ ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງຕົນ ໃນໄລຍະໜຶ່ງປີຜ່ານມາ ມີຜົນສຳເລັດຫຼາຍດ້ານ ອັນພົ້ນເດັ່ນ ໄດ້ປັບປຸງການຈັດຕັ້ງຂອງອົງການໄອຍະການໃຫ້ເປັນລະບົບ ແລະ ສອດຄ່ອງກັບຕຳແໜ່ງງານຕົວຈິງ; ໄດ້ສຸມໃສ່ຕິດຕາມກວດກາ ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໄດ້ປັບປຸງກົນໄກປະສານງານລະຫວ່າງ ອົງການໄອຍະການປະຊາຊົນແຂວງ ກັບ 5 ອົງການສືບສວນ-ສອບສວນ ເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາດ ຄົ້ນຄວ້າ ແລະ ປັບປຸງກົນໄກແບບແຜນວິທີເຮັດວຽກ ເພື່ອຍົກສູງຄຸນນະພາບໃນການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນແຂວງ-ເຂດ ດີຂຶ້ນກວ່າເກົ່າ.

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດດັ່ງກ່າວ, ກອງປະຊຸມເຫັນວ່າ ມີບາງວຽກທີ່ອົງການໄອຍະການປະຊາຊົນແຂວງ ຕ້ອງໄດ້ສືບຕໍ່ແກ້ໄຂ ດັ່ງນີ້:

1. ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາພະແນກການ, ອົງການຍັງບໍ່ທັນເລິກເຊິ່ງ, ທົ່ວເຖິງເທົ່າທີ່ຄວນ ເຮັດໃຫ້ສະຕິເຄົາລົບ ແລະ ປະຕິບັດກົດໝາຍບໍ່ທັນສູງ, ປະກົດການຫຍໍ້ທໍ້ ແລະ ການລະເມີດກົດໝາຍຍັງເກີດຂຶ້ນຫຼາຍ;

2. ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຍັງເຮັດບໍ່ທັນໄດ້ຢ່າງເລິກເຊິ່ງ ການປະຕິບັດມາດຕະການດ້ານກົດໝາຍຈຳນວນໜຶ່ງຍັງລະເມີດດ້ານເວລາ, ບັນດາໜໍ່ແໜງ ແລະອາຊະຍາກຳ ການກະທຳຜິດບາງປະເພດຍັງສືບຕໍ່ເກີດ ແລະ ແຜ່ຫຼາຍໂດຍທົ່ວໄປ ຈຳນວນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນຫຼາຍ, ແຕ່ຈຳນວນທີ່ຈັດຕັ້ງປະຕິບັດໄດ້ໜ້ອຍ;

3. ກົນໄກປະສານສົມທົບລະຫວ່າງອົງການໄອຍະການກັບເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນ ຮັບປະກັນທາງດ້ານຄຸນນະພາບເທົ່າທີ່ຄວນ, ການປະຕິບັດບົດບັນທຶກຮ່ວມ 4 ພາກສ່ວນ ເປັນຕົ້ນ ສາງເກັບຮັກສາຂອງກາງຄະດີ, ການນຳໃຊ້ກອງທຶນຄວບຄຸມຢາເສບຕິດ, ຫ້ອງເຮັດວຽກຮ່ວມຂອງ 3 ພາກສ່ວນທີ່ປະຈຳການຢູ່ຄ້າຍຄຸມຂັງ-ຄ້າຍດັດສ້າງ ຍັງພົບຄວາມຫຍຸ້ງຍາກ;

4. ການປັບປຸງບຸລະນະການຈັດຕັ້ງຂອງອົງການໄອຍະການ ຍັງພົບຄວາມຫຍຸ້ງຍາກ ໂດຍສະເພາະແມ່ນການປະຕິບັດທິດນຳຂະຫຍາຍອົງການໄອຍະການເຂດປະຈຳເມືອງ ນອກຈາກສະຖານທີ່ເຮັດວຽກແລ້ວບັນຫາບຸກຄະລາກອນທີ່ຈະເປັນຫຼັກແຫຼ່ງນຳພາປະຕິບັດຕົວຈິງ ລວມທັງບັນຫາງົບປະມານ, ອຸປະກອນຮັບໃຊ້ທີ່ຍັງບໍ່ສາມາດຕອບສະໜອງກັບຄວາມຕ້ອງການຕົວຈິງ.

**ມາດຕາ 2 ຮັບຮອງເອົາທິດທາງແຜນວຽກຈຸດສຸມ ປີ 2024 ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມເຫັນດີຮັບຮອງເອົາ 5 ຄາດໝາຍສູ້ຊົນ ແລະ 8 ວຽກງານຈຸດສຸມ ປີ 2024 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສະເໜີໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດບາງວຽກ ດັ່ງນີ້:

1. ເອົາໃຈໃສ່ກໍ່ສ້າງພະນັກງານໄອຍະການປະຊາຊົນ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ, ຄວາມຮູ້ຄວາມສາມາດ, ຄວາມຊຳນານງານ ໄປຄຽງຄູ່ກັບການເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ ພ້ອມທັງຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານໄອຍະການ ຢ່າງເຂັ້ມງວດ ຕິດພັນກັບການຍູ້ ແຮງຂະບວນການ ວຽກດີ ຄົນເດັ່ນ ຕາມຄຳຂວັນ 3 ມີ (ມີແນວຄິດການເມືອງດີ, ມີການພັດທະນາດີ, ມີຄວາມສາມັກຄີດີ) 4 ຮັບປະກັນ (ຮັບປະກັນຖືກຕ້ອງຕາມກົດໝາຍ, ຍຸຕິທຳ, ໂປ່ງໃສ ແລະ ຖືກຕ້ອງຕາມກຳນົດເວລາ) ແລະ ມາດຕະຖານລວມ ທີ່ກຳນົດໄວ້ໃນກົດໝາຍວ່າ ດ້ວຍພະນັກງານ-ລັດຖະກອນ ໃຫ້ກາຍເປັນຮູບປະທຳ;

2. ສູ້ຊົນຈັດຕັ້ງປະຕິບັດພາລະບົດບາດຕິດຕາມກວດກາທົ່ວໄປ ໃນການເຄົາລົບລັດຖະທຳມະນູນ ແລະກົດໝາຍ ຂອງບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງໃຫ້ກາຍເປັນຮູບປະທຳເປັນຈິງຫຼາຍຂຶ້ນກວ່າເກົ່າ, ສຸມໃສ່ຕິດຕາມ ກວດກາການອອກນິຕິກຳໃຕ້ກົດໝາຍ ໃຫ້ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ, ຊອກເຫັນນິຕິກຳທີ່ບໍ່ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ຫຼືບໍ່ກົມກຽວກັນ, ຂັດກັນ ເພື່ອສະເໜີໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂໃຫ້ທັນການ;

3. ຍົກສູງຄຸນນະພາບໃນການຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການສືບສວນ-ສອບ ສວນໃນການປະຕິບັດ 7 ມາດຕະການສະກັດກັ້ນ ຕາມມາດຕາ 136 ຂອງກົດໝາຍວ່າດ້ວຍການ ດຳເນີນຄະດີອາຍາ ສະບັບປີ 2017, ສຸມໃສ່ແກ້ໄຂພຶດຕິກຳລະເມີດກົດໝາຍໃນການດຳເນີນຄະດີ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ເປັນຕົ້ນ ກຳນົດເວລາໃນການສືບສວນ-ສອບສວນ, ການຂໍ ຄຳສັ່ງກັກຂັງພາງ, ການກັກຕົວ, ຈັບຕົວ, ກັກຂັງ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ປະສານສົມທົບກັບ ເຈົ້າໜ້າທີ່ສືບສວນສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສ້າງນິຕິກຳສະເພາະ ກ່ຽວກັບການປະຕິບັດ 7 ມາດຕະການສະກັດກັ້ນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວໃຫ້ມີຄວາມເປັນເອກະພາບ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະ ພາກສ່ວນ;

4. ຍົກສູງຄຸນນະພາບ ການຄົ້ນຄວ້າແກ້ໄຂຄະດີອາຍາ, ຄະດີແພ່ງ ແລະ ຄໍາຮ້ອງ, ຄໍາສະເໜີ ໃຫ້ບັນລຸຄາດໝາຍ 97% ຂອງຈໍານວນຄະດີທີ່ເຂົ້າມາທັງໝົດ; ປະຕິບັດສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການໂຕ້ແຍ່ງຢູ່ທີ່ປະຊຸມສານ ແລະ ຮັບປະກັນການຕັດສິນຂອງສານ ເອົາຕາມຄໍາຖະແຫຼງ ຂອງອົງການໄອຍະການປະຊາຊົນໃຫ້ໄດ້ 95% ຂຶ້ນໄປ;

5. ເພີ່ມທະວີການຕິດຕາມກວດກາ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ເປັນຕົ້ນ ຄະດີທີ່ມີຄວາມຫຍຸ້ງຍາກ, ສັບສົນ, ຄະດີທີ່ຜູ້ປະຕິບັດໂທດໄດ້ພົ້ນໂທດທາງອາຍາ ແຕ່ ການປະຕິບັດຄ່າເສຍຫາຍທາງແພ່ງ ແລະ ຄ່າປັບໃໝ່ ບໍ່ທັນສໍາເລັດ ແລະ ອື່ນໆ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມເຫັນດີຮັບຮອງເອົາ 5 ມາດຕະການໃນການຈັດຕັ້ງປະຕິບັດທິດທາງແຜນການ ແລະ ວຽກຈຸດສຸມ 2023 ທີ່ອົງການໄອຍະການປະຊາຊົນແຂວງ ໄດ້ກໍານົດໃນບົດລາຍງານ ແລະ ສະເໜີບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະນໍາອົງການໄອຍະການປະຊາຊົນແຂວງ, ເຂດໃນການນໍາພາ-ຊີ້ນໍາການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ອອກເປັນແຜນງານ, ໂຄງການ ແລະ ວຽກງານຈຸດສຸມ; ເອົາໃຈໃສ່ນໍາພາ-ຊີ້ນໍາການຈັດຕັ້ງປະຕິບັດວຽກງານ ປີ 2024 ຢ່າງແທດ ເຖິງ ແລະ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ບັນດານິຕິກໍາທີ່ກ່ຽວຂ້ອງ ໃຫ້ພະນັກງານໄອຍະການປະຊາຊົນ ຢ່າງກວ້າງຂວາງທັນເວລາ ເພື່ອເຮັດໃຫ້ບັນດາຄາດໝາຍສູ້ຊົນ ໃນປີ 2024 ໄດ້ຮັບການຈັດຕັ້ງປະຕິບັດມີຜົນສໍາເລັດຕາມແຜນການທີ່ໄດ້ກໍານົດໄວ້;

2. ເອົາໃຈໃສ່ຄົ້ນຄວ້າຜັນຂະຫຍາຍເນື້ອໃນຂອງກົດໝາຍ ໃນຄວາມຮັບຜິດຊອບຂອງຕົນເປັນຄໍາສັ່ງ, ຄໍາແນະນໍາ ລະອຽດຕື່ມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນ; ພ້ອມທັງປັບປຸງ ກົນໄກ, ຮູບການ, ວິທີການ ໃນການເຄື່ອນໄຫວວຽກງານຕິດຕາມ ກວດກາ ຕາມມາດຕາ 39, 40, 42, 43, 45, 46, 47, 48, 49, 50, 51, 52, 53 ແລະ ມາດຕາ 54 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຖືກຕ້ອງຕາມກົດໝາຍ;

3. ເພີ່ມທະວີການຕິດຕາມກວດກາ ຕໍ່ພະນັກງານໄອຍະ ການປະຊາຊົນ ຂັ້ນແຂວງ ແລະ ຂັ້ນເຂດ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ຮັບປະກັນ ໃຫ້ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງສູ່ຄຸນນະພາບ ສູງຂຶ້ນກວ່າເກົ່າ; ພ້ອມນັ້ນ ຕ້ອງມີມາດຕະການເດັດຂາດ ຕໍ່ພະນັກງານທີ່ມີການປະພຶດບໍ່ຖືກຕ້ອງ ແລະ ລະເມີດກົດໝາຍ;

4. ອໍານວຍຄວາມສະດວກໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການທາງດ້ານກົດໝາຍ ໃຫ້ສໍາເລັດແນໃສ່ ສ້າງຄວາມຮັບຮູ້, ຄວາມເຂົ້າໃຈໃຫ້ແກ່ປະຊາຊົນ ກ່ຽວກັບການເຂົ້າເຖິງຂະບວນຍຸຕິທໍາ ແລະ ກົດໝາຍຫຼາຍຂຶ້ນ ທັງສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ມີໂອກາດເຂົ້າຮ່ວມຕິດຕາມກວດກາ ການດໍາ ເນີນຄະດີຕາມຂະບວນຍຸຕິທໍາ, ສະກັດກັ້ນປະກົດການຫຍໍ້ທໍ້ ຢູ່ໃນຂະບວນຍຸຕິທໍາ;

5. ເພີ່ມທະວີການປະສານສົມທົບ ລະຫວ່າງ ອົງການໄອຍະການປະຊາຊົນແຂວງ ກັບ ສານປະຊາຊົນແຂວງ, ອົງການສືບສວນ-ສອບສວນ, ອົງການປະຕິບັດຄໍາຕັດສິນຂອງສານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເຂດໃຫ້ມີຄວາມກົມກຽວ ແລະ ເປັນເອກະພາບກັນ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການໄອຍະການປະຊາຊົນແຂວງ, ອົງການໄອຍະການປະຊາຊົນເຂດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ອົງການປົກຄອງແຂວງ ຊີ້ນໍາພະແນກການ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ສ້າງເງື່ອນ

ໄຂອໍານວຍຄວາມສະດວກໃຫ້ແກ່ອົງການໄອຍະການປະຊາຊົນແຂວງ ໃນການເຄື່ອນໄຫວວຽກງານ ແລະ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;

3. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະເລຂາທິການ ສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄໍາພັນເພັງ